ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 2043/ພບ

ນະຄອນຫຼວງວຽງຈັນ, ວັນທີ 11 ຕຸລາ 2023

# ຂໍ້ຕົກລົງ
# ວ່າດ້ວຍການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 624/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1435/ຫສນຍ, ລົງວັນທີ 04 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງພະລັງງານ ສະບັບເລກທີ 0733/ພບ.ກຄພ, ລົງວັນທີ 18 ສິງຫາ 2023.

## ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການຕິດຕາມ, ການກວດກາ ແລະ ການເຄື່ອນໄຫວວຽກງານການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ແນໃສ່ປົກປ້ອງຜົນປະໂຫຍດຂອງລັດ, ຜູ້ປະກອບການດຳເນີນທຸລະກິດ, ຜູ້ຊົມໃຊ້ນ້ຳມັນເຊື້ອໄຟ ແລະ ປ່ຽນແທນການກຳນົດສານສີໃນນ້ຳມັນເຊື້ອໄຟ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມຂອງຊາດ.

### ມາດຕາ 2 ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ

ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ແມ່ນການນຳໃຊ້ສານເຄມີທີ່ໄດ້ຈາກສານໄຮໂດກາກບອນ, ສານເຄມີອື່ນ ຢອດໃສ່ນ້ຳມັນເຊື້ອໄຟທີ່ຜະລິດ, ປຸງແຕ່ງພາຍໃນປະເທດ ແລະ ນຳເຂົ້າມາຈາກຕ່າງປະເທດ ເພື່ອເປັນສັນຍາລັກ ຫຼື ເຄື່ອງໝາຍ, ຢັ້ງຢືນຄວາມຖືກຕ້ອງໃນການຕິດຕາມ, ກວດກາ ແລະ ປະຕິບັດພັນທະຕ່າງໆໃຫ້ລັດ.

### ມາດຕາ 3 ການນຳເຂົ້າ ແລະ ນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ

ການນຳເຂົ້າ ແລະ ນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ແມ່ນກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ໄດ້ຮັບອະນຸຍາດນຳເຂົ້າ ແລະ ນຳໃຊ້ ພຽງຜູ້ດຽວ ຕາມລະບຽບການ.

ບຸກຄົນ ແລະ ນິຕິບຸກຄົນ ທີ່ຜະລິດ, ປຸງແຕ່ງພາຍໃນປະເທດ ແລະ ນຳເຂົ້າມາຈາກຕ່າງປະເທດ ຕ້ອງປະກອບຄຳຮ້ອງລົງທະບຽນນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ຕໍ່ກະຊວງພະລັງງານ ແລະ ບໍ່ແຮ່.

### ມາດຕາ 4 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນ້ຳມັນເຊື້ອໄຟ ທີ່ຕ້ອງຍອດສານມາກເກີ ໝາຍເຖິງ** ນ້ຳມັນແອັດຊັງ ແລະ ນ້ຳມັນກາຊວນ ທີ່ຜະລິດ, ປຸງແຕ່ງພາຍໃນປະເທດ ແລະ ນຳເຂົ້າມາຈາກຕ່າງປະເທດ;
2. **ສານມາກເກີ ສຳລັບຍອດໃສ່ນ້ຳມັນເຊື້ອໄຟ ໝາຍເຖິງ** ສານເຄມີ ທີ່ສັງເຄາະຂຶ້ນມາຈາກສານໄຮໂດກາກບອນ ແລະ ສານເຄມີອື່ນໆ ທີ່ມີຄຸນສົມບັດເປັນທາດປະສົມເຂົ້າກັນກັບນ້ຳມັນເຊື້ອໄຟໃຫ້ເປັນເນື້ອດຽວກັນໄດ້;
3. **ການຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ ໝາຍເຖິງ** ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ເພື່ອເປັນສັນຍາລັກ ຫຼື ເຄື່ອງໝາຍ ຢັ້ງຢືນຄວາມຖືກຕ້ອງການປະຕິບັດຕາມຂັ້ນຕອນ, ລະບຽບການ ແລະ ກົດໝາຍ;
4. **ການກວດກາແລະ ຢັ້ງຢືນການຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ ໝາຍເຖິງ** ການກວດກາ, ວິເຄາະຫາປະລິມານ ແລະ ປະເພດສານມາກເກີໃນນ້ຳໃນເຊື້ອໄຟທີ່ຜະລິດ, ປຸງແຕ່ງຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ດ້ວຍການນຳໃຊ້ເຄື່ອງມືສະເພາະ;
5. **ການຍອດສານມາກເກີໃສ່ນ້ຳມັນເຊື້ອໄຟທີ່ບໍ່ຖືກຕ້ອງ ໝາຍເຖິງ** ການຍອດສານມາກເກີ ທີ່ຜິດປະເພດ ປະລິມານສານມາກເກີທີ່ຍອດໃສ່ນ້ຳມັນເຊື້ອໄຟບໍ່ຖືກຕ້ອງຕາມປະລິມານທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ການນຳເຂົ້າ ແລະ ການຍອດໂດຍບໍ່ໄດ້ຮັບອະນຸຍາດ;
6. **ເຈົ້າໜ້າທີ່ພະນັກງານ ໝາຍເຖິງ** ບັນດາພະນັກງານ ທີ່ກຳນົດໄວ້ໃນອົງການຄຸ້ມຄອງການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ;
7. **ໃບຢັ້ງຢືນການລົງທະບຽນນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ໝາຍເຖິງ** ເອກະສານຢັ້ງຢືນເລກລະຫັດການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ໃຫ້ແກ່ຜູ້ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ ແລະນຳເຂົ້າ ນ້ຳມັນເຊື້ອໄຟ ທີ່ອອກໂດຍກະຊວງພະລັງງານ ແລະ ບໍ່ແຮ່;
8. **ໃບຢັ້ງຢືນການຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ ໝາຍເຖິງ** ເອກະສານຢັ້ງຢືນວ່ານ້ຳມັນເຊື້ອໄຟຂອງຜູ້ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ ແລະ ນຳເຂົ້ານ້ຳມັນເຊື້ອໄຟໄດ້ຮັບການຍອດສານມາກເກີແລ້ວ ແລະ ອອກໂດຍຂະແໜງພະລັງງານ ແລະ ບໍ່ແຮ່ທີ່.

### ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຜະລິດ, ປຸງແຕ່ງ ແລະ ນຳເຂົ້ານ້ຳມັນເຊື້ອໄຟ ຢູ່ ສປປ ລາວ.

## ໝວດທີ 2

## ຮູບການ ແລະ ການລົງທະບຽນການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ

### ມາດຕາ 6 ຮູບການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ

ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ປະກອບດ້ວຍຮູບການ ດັ່ງນີ້:

1. ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ທີ່ຜະລິດ ແລະ ປຸງແຕ່ງພາຍໃນປະເທດ;
2. ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ທີ່ນຳເຂົ້າມາຈາກຕ່າງປະເທດ.

### ມາດຕາ 7 ການລົງທະບຽນນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ

ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຜະລິດ, ປຸງແຕ່ງພາຍໃນ ແລະ ນຳເຂົ້ານ້ຳມັນເຊື້ອໄຟຈາກຕ່າງປະເທດ ຕ້ອງລົງທະບຽນການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ເພື່ອຢັ້ງຢືນເລກລະຫັດການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ນຳກະຊວງພະລັງງານ ແລະ ບໍ່ແຮ່.

ກໍລະນີ ການປ່ຽນແປງເນື້ອໃນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຜະລິດ, ປຸງແຕ່ງພາຍໃນ ແລະ ນຳເຂົ້ານ້ຳມັນເຊື້ອໄຟຈາກຕ່າງປະເທດ ນິຕິບຸກຄົນ ຕ້ອງລົງທະບຽນນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ຕ້ອງປະກອບຄຳຮ້ອງຕໍ່ກະຊວງພະລັງງານ ແລະ ບໍ່ແຮ່.

**ມາດຕາ 8 ຂັ້ນຕອນການລົງທະບຽນນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ**

ການລົງທະບຽນນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ປະກອບດ້ວຍຂັ້ນຕອນ ດັ່ງນີ້:

1. ຍື່ນຄຳຮ້ອງ ຕໍ່ກົມຄຸ້ມຄອງພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່;
2. ການພິຈາລະນາຄຳຮ້ອງຂໍລົງທະບຽນນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ;
3. ການອອກໃບຢັ້ງຢືນລົງທະບຽນນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ.

**ມາດຕາ 9 ການປະກອບເອກະສານລົງທະບຽນ ນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ**

ການລົງທະບຽນນຳໃຊ້ສານມາກເກີຕ້ອງປະກອບເອກະສານດັ່ງນີ້:

1. ຍື່ນຄຳຮ້ອງຂໍລົງທະບຽນການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ (ຕາມແບບຟອມ);
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບຢັ້ງຢືນຕົວເລກຜູ້ເສຍອາກອນ;
4. ສຳເນົາໃບຢັ້ງຢືນດຳເນີນກິດຈະການໂຮງງານ (ສຳລັບການຜະລິດ ແລະ ປຸງແຕ່ງພາຍໃນ);
5. ສຳເນົາໃບອະນຸຍາດດຳເນີນທຸລະກິດບໍລິສັດນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ.

**ມາດຕາ 10 ການພິຈາລະນາຢັ້ງຢືນການລົງທະບຽນການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ**

ພາຍຫຼັງ ໄດ້ຮັບເອກະສານຖືກຕ້ອງຄົບຖ້ວນແລ້ວ ຕ້ອງພິຈາລະນາອອກໃບຢັ້ງຢືນການລົງທະບຽນ ພາຍໃນກຳນົດເວລາ 3 ວັນ (ສາມວັນ) ລັດຖະການ. ກໍລະນີເອກະສານບໍ່ຖືກຕ້ອງຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຮັບຊາບພາຍໃນກຳນົດເວລາ 1 ວັນ (ໜຶ່ງວັນ) ລັດຖະການ.

**ມາດຕາ 11 ການໂຈະ ຫຼື ຖອນ ໃບຢັ້ງຢືນການລົງທະບຽນການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ**

ໃບຢັ້ງຢືນການລົງທະບຽນການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ຈະຖືກໂຈະ ຫຼື ຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ, ໃບຢັ້ງຢືນດຳເນີນກິດຈະການໂຮງງານ ໝົດອາຍຸ;
2. ມີຄຳຕັດສິນ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບ ການດຳເນີນທຸລະກິດຜະລິດ, ປຸງແຕ່ງພາຍໃນ ແລະ ນຳເຂົ້ານ້ຳມັນເຊື້ອໄຟຈາກຕ່າງປະເທດ;
3. ການສະເໜີຂອງຜູ້ດຳເນີນທຸລະກິດຜະລິດ, ປຸງແຕ່ງພາຍໃນ ແລະ ນຳເຂົ້ານ້ຳມັນເຊື້ອໄຟ ຈາກຕ່າງປະເທດ;
4. ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ.

## ໝວດທີ 3

## ການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ

**ມາດຕາ 12 ການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ທີ່ຜະລິດ ແລະ ປຸງແຕ່ງພາຍໃນປະເທດ**

ພາຍຫຼັງ ນ້ຳມັນເຊື້ອໄຟ ທີ່ຜະລິດ ແລະ ປຸງແຕ່ງພາຍໃນປະເທດ ໄດ້ຮັບການຢັ້ງຢືນກວດສອບຄຸນນະພາບນ້ຳມັນເຊື້ອໄຟ ແລ້ວ, ຜູ້ທີ່ດຳເນີນທຸລະກິດຜະລິດ ແລະ ປຸງແຕ່ງນ້ຳມັນເຊື້ອໄຟ ຕ້ອງປະກອບເອກະສານ

ຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່ ເພື່ອດຳເນີນການຢອດສານມາກເກີ ແລະ ອອກໃບຢັ້ງຢືນການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ກ່ອນນຳອອກຈາກໂຮງງານ.

**ມາດຕາ 13 ການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ທີ່ນຳເຂົ້າຈາກຕ່າງປະເທດ**

ພາຍຫຼັງ ນ້ຳມັນເຊື້ອໄຟ ທີ່ນຳເຂົ້າຈາກຕ່າງປະເທດ ໄດ້ຮັບການຢັ້ງຢືນກວດສອບຄຸນນະພາບນ້ຳມັນເຊື້ອໄຟ ຈາກຂະແໜງອຸດສາຫະກຳ ແລະ ການຄ້າ ແລ້ວ, ຜູ້ດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ຕ້ອງປະກອບເອກະສານຕໍ່ໜ່ວຍງານຢອດສານມາກເກີ ຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ປະຈຳດ່ານ ເພື່ອດຳເນີນການຢອດສານມາກເກີ ແລະ ອອກໃບຢັ້ງຢືນການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ກ່ອນນຳອອກຈາກດ່ານ.

**ມາດຕາ 14 ການປະກອບເອກະສານຂໍຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ**

ການປະກອບເອກະສານ ຂໍຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ທີ່ຜະລິດ ແລະ ປຸງແຕ່ງພາຍໃນ ມີດັ່ງນີ້:

1. ຍື່ນຄຳຮ້ອງຂໍຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ (ຕາມແບບຟອມ);
2. ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
3. ສຳເນົາໃບຢັ້ງຢືນການກວດສອບຄຸນນະພາບນ້ຳມັນເຊື້ອໄຟ;
4. ສຳເນົາໃບຢັ້ງຢືນແຜນການຜະລິດ ແລະ ຈຳໜ່າຍ ທີ່ຮັບຮອງຈາກຂະແໜງອຸດສາຫະກຳ ແລະ ການຄ້າ.

ການປະກອບເອກະສານ ຂໍຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ທີ່ນຳເຂົ້າ ແລະ ສົ່ງອອກ ມີດັ່ງນີ້:

1. ຍື່ນຄຳຮ້ອງຂໍຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ(ຕາມແບບຟອມ);
2. ສຳເນົາໃບຢັ້ງຢືນການກວດສອບຄຸນນະພາບນ້ຳມັນເຊື້ອໄຟ;
3. ສຳເນົາໃບແຈ້ງພາສີເປັນລາຍລະອຽດ;
4. ສຳເນົາໃບອະນຸຍາດນຳເຂົ້າ ແລະ ແຜນການນຳເຂົ້າ ທີ່ຮັບຮອງຈາກ ຂະແໜງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 15 ການອອກໃບຢັ້ງຢືນການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ**

ພາຍຫຼັງ ຂະແໜງພະລັງງານ ແລະ ບໍ່ແຮ່ ໄດ້ຮັບເອກະສານຖືກຕ້ອງຄົບຖ້ວນແລ້ວ ຕ້ອງສົມທົບກັບເຈົ້າຂອງ ຫຼື ຜູ້ຕາງໜ້າ ນ້ຳມັນເຊື້ອໄຟ ລົງຢອດ ແລະ ອອກໃບຢັ້ງຢືນການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ກ່ອນຈະອອກຈາກໂຮງງານ ຫຼື ດ່ານ. ກໍລະນີ ເອກະສານບໍ່ຖືກຕ້ອງຄົບຖ້ວນ ຕ້ອງແຈ້ງ ໃຫ້ຜູ້ຂໍຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ຮັບຊາບ ໃນທັນທີ.

**ມາດຕາ 16 ປະເພດການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ**

ການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ປະກອບດ້ວຍ ສອງ ປະເພດ ດັ່ງນີ້:

1. ນ້ຳມັນເຊື້ອໄຟ ທີ່ຜະລິດ, ປຸງແຕ່ງ ແລະ ນຳເຂົ້າ ເພື່ອຈຳໜ່າຍ;
2. ນ້ຳມັນເຊື້ອໄຟ ທີ່ໄດ້ຮັບນະໂຍບາຍຍົກເວັ້ນພາສີ ແລະ ພັນທະອື່ນ ຈາກລັດຖະບານ.

## ໝວດທີ 4

## ຄ່າລົງທະບຽນ ແລະ ຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ

**ມາດຕາ 17 ຄ່າລົງທະບຽນນຳໃຊ້ສານມາກເກີຢອດໃສ່ນ້ຳມັນເຊື້ອໄຟ**

ອັດຕາການເກັບຄ່າລົງທະບຽນນຳໃຊ້ສານມາກເກີຢອດໃສ່ນ້ຳມັນເຊື້ອໄຟ ແມ່ນ ກຳນົດໄວ້ໃນລະບຽບການຕ່າງຫາກ ຫຼື ຕາມການຕົກລົງເຫັນດີຂອງລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 18 ຄ່າຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ**

ອັດຕາການເກັບຄ່າຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ ແມ່ນ ກຳນົດໄວ້ໃນລະບຽບການຕ່າງຫາກ ຫຼື ຕາມການຕົກລົງເຫັນດີຂອງລັດຖະບານ ໃນແຕ່ລະໄລຍະ.

## ໝວດທີ 5

## ການຄຸ້ມຄອງ ແລະ ກວດກາ ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ

**ມາດຕາ 19 ອົງການຄຸ້ມຄອງ ແລະ ກວດກາ ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ**

ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຄຸ້ມຄອງ ແລະ ກວດກາການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກົມຄຸ້ມຄອງພະລັງງານ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບ ກັບ ພາກສ່ວນອື່ນ ແລະ ອົງການຈັດຕັ້ງປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ**

ອົງການຄຸ້ມຄອງ ແລະ ກວດກາ ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາ, ຄົ້ນຄວ້າ, ສ້າງ, ປັບປຸງແລະ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ມາດຕະການ, ລະບຽບການ ແລະ ຂໍ້ແນະນຳ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ;
2. ນຳເຂົ້າ ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ດຳເນີນການຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ ທີ່ຜະລິດ, ປຸງແຕ່ງຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ;
4. ອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນການລົງທະບຽນນຳໃຊ້ສານມາກເກີນ້ຳມັນເຊື້ອໄຟ;
5. ອອກໃບຢັ້ງຢືນການຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ;
6. ຮັບ ແລະ ຄົ້ນຄ້ວາພິຈະນາຕໍ່ຄຳສະເໜີ, ຄຳຮ້ອງທຸກ ແລະ ບັນຫາອື່ນ ກ່ຽວກັບ ວຽກງານການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ;
7. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ.

**ມາດຕາ 21 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການຜະລິດ, ປຸງແຕ່ງ ແລະ ນຳເຂົ້ານ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດການຜະລິດ, ປຸງແຕ່ງ ແລະ ນຳເຂົ້ານ້ຳມັນເຊື້ອໄຟ ມີສິດ ດັ່ງນີ້:

1. ໄດ້ຮັບການຍອດ ແລະ ຢັ້ງຢືນການຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ;
2. ສະເໜີໃຫ້ມີການກວດກາການຍອດສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ;
3. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນ;
4. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

ຜູ້ດຳເນີນທຸລະກິດການຜະລິດ, ປຸງແຕ່ງ ແລະ ນຳເຂົ້າ ນ້ຳມັນເຊື້ອໄຟ ມີພັນທະ ດັ່ງນີ້:

1. ຕ້ອງຍື່ນເອກະສານລົງທະບຽນ ເພື່ອຂໍຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ;
2. ລົງທະບຽນການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ;
3. ຊຳລະຄ່າລົງທະບຽນ ແລະ ຄ່າຍອດສານມາກເກີໃສ່ນ້ຳມັນເຊື້ອໄຟ;

4. ສົ່ງແຜນການຜະລິດ ແລະ ປຸງແຕ່ງປະຈຳປີ ແລະ ບົດສະຫຼຸບປະຈຳປີ ນ້ຳມັນເຊື້ອໄຟທີ່ຂະແໜງການກ່ຽວຂ້ອງໄດ້ຢັ້ງຢືນ ແລະ ຮັບຮອງ;
5. ສົ່ງແຜນນຳເຂົ້ານ້ຳມັນເຊື້ອໄຟ ທີ່ໄດ້ຮັບຢັ້ງຢືນຈາກ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ກ່ອນວັນທີ31 ຕຸລາ ຂອງແຕ່ລະປີ;
6. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 ການກວດກາ ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ**

ການກວດກາ ການນຳໃຊ້ສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ ແມ່ນ ການຕິດຕາມ, ກວດກາຄວາມຖືກຕ້ອງຂອງນ້ຳມັນເຊື້ອໄຟທີ່ຜະລິດ, ປຸງແຕ່ງຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ວ່າໄດ້ຮັບການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟແລ້ວ, ຖືກຕ້ອງຄົບຖ້ວນ ຕາມປະເພດ ແລະ ປະລິມານທີ່ກຳນົດໄວ້.

**ມາດຕາ 23 ເນື້ອໃນການກວດກາ**

1. ການປະຕິບັດກົດໝາຍ, ລະບຽບການ, ຂັ້ນຕອນຖືກຕ້ອງ ແລະ ຄົບຖ້ວນ;
2. ກວດປະລິມານ ແລະ ປະເພດຂອງສານມາກເກີໃນນ້ຳມັນເຊື້ອໄຟ ທີ່ຜະລິດ, ປຸງແຕ່ງພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ;
3. ປະຕິບັດການກວດກາອື່ນ ຕາມລະບຽບກົດໝາຍ.

**ມາດຕາ 24 ຮູບການກວດກາ**

ການກວດກາ ມີສາມຮູບການດັ່ງນີ້:

1. ການກວດກາປົກກະຕິ ແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ: ແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

**ໝວດທີ 6**
**ຂໍ້ຫ້າມ**

**ມາດຕາ 25 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານການຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ;
2. ນຳເຂົ້າ, ຈຳໜ່າຍ ແລະ ຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ;
3. ປອມແປງສານມາກເກີຍອດໃສ່ນ້ຳມັນເຊື້ອໄຟ;
4. ຈຳໜ່າຍນ້ຳມັນເຊື້ອໄຟ ທີ່ບໍ່ໄດ້ຮັບການຢອດສານມາກເກີ, ບໍ່ຖືກຕາມປະລິມານ ແລະ ປະເພດຂອງສານມາກເກີ;
5. ໃຫ້ການຊ່ວຍເຫຼືອປົກປ້ອງຜູ້ລະເມີດ;
6. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 26 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດນ້ຳມັນເຊື້ອໄຟ**

ຜູ້ດຳເນີນທຸລະກິດກ່ຽວກັບ ນ້ຳມັນເຊື້ອໄຟ ຫ້າມມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ ແລະ ຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ;
2. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ພະນັກງານທີ່ກ່ຽວຂ້ອງລັກລອບນຳເຂົ້າ ແລະ ຢອດສານມາກເກີໃສ່ນ້ຳມັນເຊື້ອໄຟ;
3. ຈຳໜ່າຍນ້ຳມັນເຊື້ອໄຟ ທີ່ບໍ່ໄດ້ຮັບການຢອດສານມາກເກີ, ບໍ່ຖືກຕາມປະລິມານ ແລະ ປະເພດຂອງສານມາກເກີ;
4. ປອມແປງເອກະສານ ແລະ ໃບຢັ້ງຢືນຕ່າງໆທີ່ກ່ຽວຂ້ອງກັບການນຳໃຊ້ສານມາກເກີຢອດໃສ່ນ້ຳມັນເຊື້ອໄຟ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 27 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ**

ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງກັບການນຳໃຊ້ສານມາກເກີຢອດໃສ່ນ້ຳມັນເຊື້ອໄຟ ຫ້າມມີພຶດຕິກຳ ດັ່ງນີ້:

1. ຢອດສານມາກເກີ ໃສ່ນ້ຳມັນເຊື້ອໄຟໃຫ້ຜູ້ທີ່ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ ແລະ ນຳເຂົ້ານ້ຳມັນເຊື້ອໄຟ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
3. ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງຕໍ່ຜູ້ດຳເນີນທຸລະກິດ;
4. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;
5. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ແລະ ບິດເບືອນຄວາມຈິງ;
6. ປິດບັງ, ປົກປ້ອງ ແລະ ໃຫ້ຄວາມຮ່ວມມືແກ່ຜູ້ກະທຳຜິດ;
7. ເປີດເຜີຍຂໍ້ມູນຄວາມລັບ ກ່ຽວກັບ ສານມາກເກີຢອດໃສ່ນ້ຳມັນເຊື້ອໄຟ;
8. ປອມແປງເອກະສານ ແລະ ໃຊ້ເອກະສານປອມ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕາມກົດໝາຍ.

**ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ກຳນົດສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ມາດຕະການທາງແພ່ງ ຫຼື ລົງໂທດຕາມກົດໝາຍ ກໍລະນີເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຄຸ້ມຄອງ ມອບໃຫ້ກົມຄຸ້ມຄອງພະລັງງານເປັນຜູ້ຜັນຂະຫຍາຍ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ;

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ຈົ່ງໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພິມລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຮັກສາການ ລັດຖະມົນຕີ

ທອງພັດ ອິນທະວົງ